ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ
NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ທະນາຄານແຫ່ງ ສປປລາວ (ທຫລ) ຈັດຕັ້ງເຜີຍແຜ່ດຳລັດວ່າດ້ວຍທຸລະກິດເຊົ່າສິນເຊື່ອ (ສະບັບປັບປຸງ)




ໃນວັນທີ 21 ແລະ 23 ທັນວາ 2021 ຜ່ານມາ, ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ຈັດເຜີຍແຜ່ດຳລັດວ່າດ້ວຍທຸລະກິດເຊົ່າສິນເຊື່ອຂຶ້ນ ຢູ່ທີ່ສະຖາບັນການທະນາຄານ, ນະຄອນຫຼວງວຽງຈັນ ໂດຍພາຍໃຕ້ການເປັນປະທານຂອງ ທ່ານ ໄຊລືຊາ ຜຸຍຍະວົງ ຫົວໜ້າກົມນິຕິກຳ, ທຫລ ເຊິ່ງມີຜູ້ເຂົ້າຮ່ວມທີ່ມາຈາກ ບັນດາກົມພາຍໃນ ທຫລ ແລະ ບໍລິສັດເຊົ່າສິນເຊື່ອ.

ຈຸດປະສົງຂອງການຈັດກອງປະຊຸມເຜີຍແຜ່ໃນຄັ້ງນີ້ ເພື່ອແນ່ໃສ່ໃຫ້ບັນດາຜູ້ເຂົ້າຮ່ວມມີຄວາມເຂົ້າໃຈຢ່າງເລິກເຊິ່ງກ່ຽວກັບດຳລັດສະບັບປັບປຸງດັ່ງກ່າວ ເພື່ອນຳໄປເຜີຍແຜ່ໃຫ້ພະນັກງານຂອງຕົນເຂົ້າໃຈກ່ຽວກັບ ທຸລະກິດເຊົ່າສິນເຊື່ອ ແລະ ການດຳເນີນທຸລະກິດເຊົ່າສິນເຊື່ອ.

ທ່ານ ໄຊລືຊາ ຜຸຍຍະວົງ ໄດ້ໃຫ້ຮູ້ຕື່ມວ່າ: ກ່ອນໜ້ານີ້ ນາຍົກລັດຖະມົນຕີ ໄດ້ປະກາດໃຊ້ດຳລັດເຊົ່າສິນເຊື່ອສະບັບເລກທີ 11/ນຍ, ລົງວັນທີ 18 ກຸມພາ 1999 ເພື່ອຮັບໃຊ້ເຂົ້າວຽກງານເຊົ່າສິນເຊື່ອມາໄດ້ 20 ກວ່າປີ ແຕ່ເນື່ອງຈາກສະພາບການດຳເນີນທຸລະກິດເຊົ່າສິນເຊື່ອມາຮອດປັດຈຸບັນໄດ້ມີການເຕີບໃຫຍ່ຂະຫຍາຍຕົວ. ສະນັ້ນ, ທະນາຄານແຫ່ງ ສປປ ລາວ ຈຶ່ງເຫັນວ່າມີຄວາມຈຳເປັນຕ້ອງໄດ້ຄົ້ນຄວ້າປັບປຸງດຳລັດດັ່ງກ່າວຄືນໃໝ່ ເພື່ອໃຫ້ແທດເໝາະກັບສະພາບການຄຸ້ມຄອງວຽກງານຕົວຈິງ ເຊິ່ງດຳລັດສະບັບເລກທີ 471/ລບ ນີ້ ໄດ້ຖືກຮັບຮອງ ແລະ ປະກາດໃຊ້ ໃນວັນທີ 2 ກໍລະກົດ 2021 ໂດຍປະກອບມີ 9 ໝວດ 47 ມາດຕາເຊິ່ງໄດ້ກຳນົດຫຼັກ ແລະ ມາດຕະການ ກ່ຽວກັບການຄຸ້ມ



ຄອງ ແລະ ການກວດກາວຽກງານເຊົ່າສິນເຊື່ອ ຢ່າງຈະແຈ້ງເພື່ອໃຫ້ການບໍລິການດັ່ງກ່າວມີຄຸນນະພາບ, ຖືກຕ້ອງໂປ່ງໃສ ແລະ ຍຸຕິທຳແນ່ໃສ່ສ້າງຄວາມເຊື່ອໝັ້ນໃຫ້ແກ່ການໃຊ້ບໍລິການທຸລະກິດເຊົ່າສິນເຊື່ອ ພ້ອມທັງເປັນການປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ.





***# ຂ່າວ: ສົມອິກ, ພາບ: ສົມບຸນ***

*ໃຊ້ເງິນກີບທົ່ວທັງຊາດ ສ້າງບົດບາດ ຄ່າເງິນລາວ*